**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພາຍໃນ
ຫ້ອງການ

ເລກທີ 228/ຫກ
ນະຄອນຫຼວງວຽງຈັນ, ວັນທີ 26 ເມສາ 2023

# ແຈ້ງການ

**ຮຽນ: ທ່ານປະທານສະມາຄົມ, ມູນນິທິ ທີ່ນັບຖື.**

**ເລື່ອງ: ການເຄື່ອນໄຫວວຽກງານຢູ່ຂັ້ນທ້ອງຖິ່ນ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງພາຍໃນ ສະບັບເລກທີ 225/ພນ, ລົງວັນທີ 16 ພຶດສະພາ 2022;
- ອີງຕາມດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011;
- ອີງຕາມ ດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

ຫ້ອງການກະຊວງພາຍໃນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ປັດຈຸບັນ ມີຫຼາຍສະມາຄົມ, ມູນນິທິ ທີ່ໄດ້ຮັບການອະນຸມັດສ້າງຕັ້ງ ແລະ ຄຸ້ມຄອງພາຍໃຕ້ດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ແລະ ດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 ເຫັນວ່າມີການເຄື່ອນໄຫວວຽກງານໄດ້ດີຕະຫຼອດມາ ແລະ ມີຜົນງານດີເດັ່ນຫຼາຍດ້ານ ສາມາດຊ່ວຍລັດຖະບານໃນຂະແໜງການຕ່າງໆ ໂດຍສະເພາະດ້ານສັງຄົມສົງເຄາະ, ວຽກງານໄພພິບັດ, ຊ່ວຍເຫຼືອຊຸມຊົນທຸກຍາກຕ່າງໆ ແລະ ອື່ນໆ. ເຖິງຢ່າງໃດກໍຕາມ, ການເຄື່ອນໄຫວວຽກງານຂອງສະມາຄົມ, ມູນນິທິ ຜ່ານມາ ໂດຍສະເພາະການພົວພັນປະສານງານກັບພາກສ່ວນຕ່າງໆ ຢູ່ຂັ້ນທ້ອງຖິ່ນ ບາງຄັ້ງຍັງບໍ່ທັນລ່ອງຊ່ອງເອກະພາບກັນ, ບໍ່ໄດ້ຮັບການຮ່ວມມື ເຮັດໃຫ້ບໍ່ສາມາດເກັບກຳ ແລະ ຢັ້ງຢືນຜົນງານຂອງບັນດາສະມາຄົມ ແລະ ມູນນິທິ ໄດ້ດີເທົ່າທີ່ຄວນ. ສະນັ້ນ, ເພື່ອໃຫ້ການພົວພັນປະສານງານ ການຈັດຕັ້ງປະຕິບັດວຽກງານຂອງບັນດາສະມາຄົມ ແລະ ມູນນິທິ ໃຫ້ໄດ້ຮັບການຮ່ວມມືທີ່ດີຂຶ້ນກວ່າເກົ່າ ແລະ ມີຄວາມເປັນເອກະພາບ, ຫ້ອງການກະຊວງພາຍໃນ ຂໍແຈ້ງມາຍັງທ່ານ ກ່ຽວກັບການເຄື່ອນໄຫວວຽກງານຂັ້ນທ້ອງຖິ່ນ ໃຫ້ປະຕິບັດ ດັ່ງນີ້:

1. ການໄປເຄື່ອນໄຫວວຽກງານ ຫຼື ກິດຈະກຳຕ່າງໆ ຂອງສະມາຄົມ, ມູນນິທິ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ຕ້ອງໄດ້ສະເໜີຫາພະແນກພາຍໃນຂັ້ນແຂວງ, ຫ້ອງການພາຍໃນຂັ້ນເມືອງ ແລະ ຂະແໜງການກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືກັບສະມາຄົມ, ມູນນິທິ ໃນການຈັດຕັ້ງປະຕິບັດວຽກງານ ຫຼື ກິດຈະກຳດັ່ງກ່າວ;

2. ການສະເໜີຫາພະແນກພາຍໃນຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ຫຼື ກິດຈະກຳນັ້ນ ຕ້ອງກຳນົດຈຸດປະສົງໃຫ້ຈະແຈ້ງ ແລະ ຄັດຕິດເອກະສານກ່ຽວຂ້ອງຢ່າງລະອຽດ;



Scanned with CamScanner

**3.** ການເຄື່ອນໄຫວວຽກງານຕົວຈິງແຕ່ລະຄັ້ງຂອງສະມາຄົມ, ມູນນິທິ ຕ້ອງເຊີນພະແນກພາຍໃນຂັ້ນແຂວງ ແລະ ຂະແໜງການກ່ຽວຂ້ອງເຂົ້າຮ່ວມນຳ;

**4.** ເວລາມີຜູ້ໃຫ້ທຶນ ຫຼື ອົງການຈັດຕັ້ງຂອງຕ່າງປະເທດ ລົງຢ້ຽມຢາມຢູ່ຫ້ອງການ ຫຼື ເບິ່ງກິດຈະກຳຂອງສະມາຄົມ, ມູນນິທິ ຕ້ອງແຈ້ງໃຫ້ພະແນກພາຍໃນຂັ້ນແຂວງ ແລະ ຂະແໜງການກ່ຽວຂ້ອງເຂົ້າຮ່ວມນຳ;

**5.** ພາຍຫຼັງສຳເລັດວຽກງານ ຫຼື ກິດຈະກຳຕາມຈຸດປະສົງຂອງສະມາຄົມ, ມູນນິທິແລ້ວ ໃຫ້ສະຫຼຸບລາຍງານ ຜົນການເຄື່ອນໄຫວຕ່າງໆ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕາມທີ່ກຳນົດໃນຂໍ້ທີ 1 ຂອງແຈ້ງການສະບັບນີ້ ເພື່ອຮັບຊາບ;

**6.** ກໍລະນີມີບັນຫາຫຍໍ້ທໍ້ເກີດຂຶ້ນກັບສະມາຄົມ, ມູນນິທິ ໃນການເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ໃຫ້ສະເໜີຫາພະແນກພາຍໃນ ແລະ ຂະແໜງການກ່ຽວຂ້ອງ ຮ່ວມກັນແກ້ໄຂ ຫຼື ສະເໜີຂັ້ນເທິງພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການຂອງລັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງພາຍໃນ
ຫ້ອງການ

ນ. ວິໄລທອນ ສູນທອນ ໄຊມົງຄຸນ

**ບ່ອນນຳສົ່ງ:**

1. ບັນດາສະມາຄົມ, ມູນນິທິ ພາກສ່ວນລະ 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ);
2. ພະແນກພາຍໃນແຂວງຂັ້ນແຂວງ ພາກສ່ວນລະ 01 ສະບັບ (ເພື່ອຊາບ);
3. ເກັບຮັກສາໄວ້ 01 ສະບັບ.



Scanned with CamScanner